# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 04-15, 2007 ( 04-15-2007 )

## ຖ່ອມຕົວຮັບໃຊ້:

**ຂໍ້ພຣະຄັມພີໃນບົດຮຽນ:** ໂຢຮັນ 13:1,3-10, 12-17

**ຄຳຖາມແຫ່ງຊີວິດ:** ເປັນຫຍັງຄຣິສຕຽນຈຶ່ງຮັບໃຊ້ຄົນອື່ນ?

**ຄວາມຈິງໃນພຣະຄັມພີ:** ເພາະວ່າ ພຣະເຢຊູຊົງຕ້ອງການໃຫ້ຜູ້ທີ່ຕິດຕາມພຣະອົງ ຖ່ອມຕົວຮັບໃຊ້ຄົນອື່ນ ເໝືອນພຣະອົງໄດ້ເຮັດມາ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອຊ່ອຍເຫລືອທ່ານໃຫ້ຄົ້ນພົບວ່າອົງພຣະເຢຊູຕ້ອງການ ຫຍັງຈາກພວກເຮົາໂດຍ:

- ໃຫ້ຮູ້ຈັກວ່າພຣະເຢຊູໄດ້ຊົງອວຍພຣະພອນໃຫ້ແກ່ຜູ້ທີ່ຕິດຕາມ, ຜູ້ຖ່ອມຕົວຮັບໃຊ້ຄົນອື່ນເໝືອນພຣະອົງ ໄດ້ເຮັດມາ ແລະ:
- ຕ້ອງການໃຫ້ພຣະເຢຊູອວຍພຣະພອນໃຫ້, ຈຳເປັນຕ້ອງຖ່ອມຕົວຮັບໃຊ້ຄົນອື່ນເໝືອນພຣະອົງໄດ້ເຮັດມາ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຣັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

### ບົດນຳ:

1. ໃນຄືນກ່ອນທີ່ພຣະອົງຈະສິ້ນພຣະຊົນ, ພຣະເຢຊູໄດ້ມອບໝາຍຕົວຢ່າງການຖ່ອມຕົວຮັບໃຊ້ໂດຍ: ພຣະອົງຊົງລ້າງຕີນໃຫ້ພວກສາວົກຂອງພຣະອົງ, ພວກສາວົກກໍໄດ້ຈັດຕຽມສຳລັບວັນເທສການປັສຄາຕາມຄຳສັ່ງຂອງພຣະເຢຊູ. ເຂົາເຈົ້າໄດ້ເອົາເຄື່ອງຂອງຂຶ້ນໄປເທິງຫ້ອງພິເສດໃນເຮືອນຫລັງນຶ່ງ . ເຖິງແມ່ນວ່າໂຢຮັນບໍ່ໄດ້ບອກວ່າແມ່ນໃຜເປັນເຈົ້າຂອງເຮືອນນັ້ນກໍຕາມ, ພວກເຮົາກໍສາມາດເຫັນຄວາມຈິງທີ່ສຄັນຫລາຍປະການ. ເບິ່ງຄືວ່າພຣະເຢຊູຮູ້ຈັກເຈົ້າຂອງເຮືອນດີ. ພຣະອົງໄດ້ແນະນຳສາວົກວ່າ: ເຮັດຈັ່ງໃດຈຶ່ງຈະໃຫ້ເຈົ້າຂອງເຮືອນຄົນນັ້ນຈັດ

ແຈງຫ້ອງຂອງລາວໄວ້ສຳລັບພວກເຮົາ ເພື່ອຮັບທານອາຫານຢູ່ທີ່ນັ້ນ. ( ມາຣະໂກ 14:13-15 ).

**ຄຳຖາມ:** ພຣະເຢຊູຕ້ອງການຫຍັງຈາກພວກເຮົາ?

**ອະທິບາຍ:** ບົດຮຽນໃນວັນນີ້ພວກເຮົາຈະໄດ້ເຫັນຄວາມແຕກຕ່າງທັສນະນິສັຍຂອງອົງພຣະເຢຊູ.

**ຄຳຖາມ:** ເປັນຫຍັງຄົນທີ່ບໍ່ເຊື່ອຈຶ່ງມີຄວາມກຽດຊັງຕໍ່ຄຣິສຕຽນທີ່ເຊື່ອຟັງ ແລະເຮັດຕາມພຣະອົງ?

**ຂ້ອຍຈະພັທນາການຖ່ອມຕົວການຮັບໃຊ້ຂອງຂ້ອຍໃຫ້ເໝືອນພຣະເຢຊູໄດ້ຢ່າງໃດ?**

## 1. <u>ຕົວຢ່າງອັນປະເສີດ:</u> ( ໂຢຮັນ 13:1,3-5)

1) ຂໍໃຫ້ນັກຮຽນອາສາສມັກອ່ານ ໂຢຮັນ 13:1,3-5

2) **ຄຳຖາມ:** (1) ຊີວິດ ແລະກິຈການຂອງພຣະເຢຊູໄດ້ປາກົດເປັນຈິງຫຍັງແດ່? ( ຄວາມຈິງພຣະເຢຊູຊົງມີຖານະຕຳແໜ່ງອັນສູງສົ່ງທີ່ສຸດ ແຕ່ພຣະອົງຊົງເລືອກ ເອົາການຖ່ອມຕົວດ້ວຍພຣະອົງເອງ)

(2) ພຣະເຢຊູໄດ້ສຳແດງຄວາມຖ່ອມຕົວໃຫ້ພວກສາວົກເຫັນຢູ່ໃນຫ້ອງຊັ້ນເທິງເຮືອນຫລັງນັ້ນຢ່າງໃດ? ( ພຣະອົງໄດ້ຊົງລ້າງຕີນຂອງສາວົກ )

3) **ອະທິບາຍ:** ພຣະເຢຊູຊົງຮູ້ລ່ວງໜ້າແລ້ວວ່າ ພຣະອົງຈະຕ້ອງສິ້ນພຣະຊົນໃນບໍ່ຊ້ານີ້. ພວກເຮົາຜູ້ທີ່ເຊື່ອບໍ່ຄວນຄິດວ່າວຽກຮັບໃຊ້ເປັນພາຣະອັນຕ່ຳຕ້ອຍ ຫລືຕ່ຳກວ່າຣະດັບຖານະຂອງພວກເຮົາ. ພວກເຮົາຕ້ອງຝຶກຝົນຄວາມຖ່ອມຕົວແລະຮັບໃຊ້ຕາມທີ່ພຣະເຢຊູຊົງໄດ້ເປັນແບບຢ່າງທີ່ປະເສີດໃຫ້ພວກເຮົານັ້ນ.

**ຄຳຖາມ:** ພຣະເຢຊູຊົງມາຈາກພຣະເຈົ້າ ແລະຊົງກັບຄືນໄປຫາພຣະເຈົ້ານັ້ນພຣະອົງມີຈຸດປະສົງຢ່າງໃດ?

4) **ອະທິບາຍ:** ພຣະອົງໄດ້ສຳແດງໃຫ້ເຫັນວ່າພຣະອົງເປັນຜູ້ຮັບໃຊ້ອັນປະເສີດຊຶ່ງບໍ່ແມ່ນເຮັດເພື່ອຕຳແໜ່ງສູງ ແຕ່ແມ່ນເພື່ອຢາກໃຫ້ມະນຸດເຮົາໄດ້ຮູ້ ແລະປະຕິບັດຕາມແບບຢ່າງຂອງພຣະອົງ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ໂຢຮັນ 13:1,3-5

1. ພຣະເຢຊູໄດ້ຊົງບອກຫຍັງກັບສາວົກໃນຂນະທີ່ພຣະອົງຊົງລ້າງຕີນໃຫ້ເຂົາເຈົ້າຢູ່ນັ້ນ?
2. ໃນສມັຍນີ້ພຣະອົງໄດ້ໃຫ້ພຣະຄຳຫຍັງແດ່ແກ່ຜູ້ທີ່ເຊື່ອໃນພຣະອົງ?
3. ໃນເມື່ອພວກເຮົາຖ່ອມຕົວຮັບໃຊ້ຄົນອື່ນ ເໝືອນກັບພຣະເຢຊູເຮັດມາ ພວກເຮົາຄວນຈະໃຫ້ຄຳແນະນຳແກ່ຄົນໃນໂລກນີ້ຢ່າງໃດ?
4. ເປັນດ້ວຍເຫດໃດ ການຖ່ອມຕົວຈຶ່ງເປັນການຍາກສຳລັບຄົນທີ່ມີຖານະສູງ, ມີຄວາມຮູ້ສູງ ແລະຄົນຮັ່ງມີ?

## 2. <u>ການຕອບສນອງຢ່າງທັມມະຊາດ:</u> ( ໂຢຮັນ 13:6-10)

1) ຂໍໃຫ້ອາສາສມັກອ່ານພຣະທັມ ໂຢຮັນ 13:6-10

2) **ຄຳຖາມ:** ເປໂຕໄດ້ຕອບສນອງໃນການທີ່ພຣະເຢຊູລ້າງຕີນໃຫ້ລາວຢ່າງໃດ? ( ເຮັດໃຫ້ເປໂຕ ອຶດອັດ, ອາຍ..)

3) ແມ່ນຫຍັງເປັນທັມມະຊາດຂອງທ່ານທີ່ຈະຕອບສນອງ ໃນເມື່ອທ່ານຍັງບໍ່ທັນເຂົ້າໃຈໃນພຣະເຈົ້າທີ່ກຳລັງທຳງານໃນຊີວິດຂອງທ່ານ?

4) **ເຣື່ອງເລົ່າ:** ຈິມມີ ແລະຈູລີເປັນຄຣິສຕຽນທີ່ມີຄວາມຊົມຊື່ນຍິນດີໃນຊີວິດແຕ່ງງານຂອງເຂົາເຈົ້າຕລອດມາ, ແຕ່ມີມື້ນຶ່ງ ຈິມມີໄດ້ບອກກັບ ຈູລີວ່າ: ພຣະເຈົ້າຕ້ອງການໃຫ້ຂ້ອຍໄປເຮັດວຽກຢູ່ເມືອງອື່ນ. ຈູລີຕົກໃຈ: ແຕ່ນາງກໍບໍ່ໄດ້ຕໍ່ຕ້ານປະການໃດ, ນາງໄດ້ໄປອະທິຖານວ່າ: " ໂອ..ພຣະອົງເຈົ້າ, ຂ້ານ້ອຍບໍ່ເຂົ້າໃຈ ວ່າພຣະອົງເຮັດຫຍັງ ຫລືເປັນດ້ວຍເຫດໃດ, ແຕ່ຂ້ານ້ອຍເຊື່ອແລະຮັບເອົາຕາມພຣະປະສົງຂອງພຣະອົງ, ບໍ່ວ່າແມ່ນຫຍັງຈະເກີດຂຶ້ນກໍຕາມຂ້ານ້ອຍຈະເຊື່ອຟັງພຣະອົງ ".

**ຄຳຖາມ:** ການຕອບສນອງຂອງນາງຈູລີໄດ້ຊີ້ໃຫ້ເຫັນວ່ານາງໄດ້ເຊື່ອ ແລະໄວ້ວາງໃຈໃນການທຳງານຂອງພຣະ

ເຈົ້າພາຍໃນຈິດໃຈຂອງນາງຢ່າງໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ໂຢຮັນ 13:6-10

1. ເປັນຫຍັງເປໂຕຈຶ່ງຍອມໃຫ້ພຣະເຢຊູລ້າງຕີນຂອງລາວ?
2. ເປັນຫຍັງຜູ້ທີ່ເຊື່ອຈຶ່ງຈຳເປັນຕ້ອງເຊື່ອ ແລະໄວ້ວາງໃຈໃນການທຳງານຂອງພຣະເຈົ້າທັ້ງ ໆ ທີ່ຍັງ ບໍ່ທັນເຂົ້າໃນໃນການກະທຳຂອງພຣະອົງ?
3. ເປັນຫຍັງຈຶ່ງຍອມໃຫ້ພຣະເຢຊູທຳງານໃນຊີວິດຂອງພວກເຮົາດ້ວຍຄວາມເຕັມໃຈແລະດ້ວຍຄວາມຖ່ອມໃຈ?

**3. <u>ພຣະພອນສັກສິດ:</u>** ( ໂຢຮັນ 13:12-17)

1) ຂໍໃຫ້ນັກຮຽນອາສາສມັກອ່ານ ໂຢຮັນ 13:12-17

2) **ຄຳຖາມ:** ແມ່ນຫຍັງເປັນຄວາມຄາດໝາຍທີ່ພຣະເຢຊູໃຫ້ຜູ້ທີ່ຕິດຕາມພຣະອົງຮັບໃຊ້ດ້ວຍຄວາມຖ່ອມຕົວ?

3) **ອະທິບາຍ:** -ເພື່ອໃຫ້ພວກເຮົາຮັບໃຊ້ຄົນອື່ນດ້ວຍຄວາມຖ່ອມຕົວເໝືອນດັ່ງພຣະອົງໄດ້ຊົງເຮັດນັ້ນ.

- ບໍ່ພຽງແຕ່ຕົວຢ່າງໃນການລ້າງຕີນເທົ່ານັ້ນ, ໃນຊີວິດການຮັບໃຊ້ຂອງພຣະອົງຍັງມີຜົນດີຕລອດຈົນເຖິງການ ສິ້ນພຣະຊົນ ແລະການຄືນພຣະຊົນຂອງພຣະອົງແມ່ນເປັນຕົວຢ່າງ ແລະເປັນສິ່ງສຳຄັນສຳລັບຊີວິດຂອງພວກ ເຮົາທັງນັ້ນ.
- ແນະນຳໃຫ້ກັບໄປຫາຄົນຂ້າງບ້ານ ແລະຍາດຕິພີ່ນ້ອງຂອງພວກເຮົາ, ແລ້ວມາສົນທະນາກັນວ່າ: ພວກເຮົາຍັງ ມີຫລາຍທາງ, ຫລາຍວິທີທີ່ພວກເຮົາຜູ້ທີ່ເຊື່ອຕ້ອງຮັບໃຊ້ເຂົາເຈົ້າດ້ວຍຄວາມຖ່ອມຕົວ, ເພື່ອເປັນພຍານໃນການ ຮັບໃຊ້ທີ່ຖ່ອມຕົວຂອງອົງພຣະເຢຊູໄດ້ເຮັດມາ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ໂຢຮັນ 13:12-17

1. ເບິ່ງການຮັບໃຊ້ທີ່ຖ່ອມຕົວໃນໂລກສມັຍນີ້ມີຫຍັງແດ່?
2. ຜູ້ທີ່ເຮັດຕາມແບບຢ່າງການຮັບໃຊ້ທີ່ຖ່ອມຕົວຂອງພຣະເຢຊູໄດ້ນຳພຣະພອນມາສູ່ພວກເຮົາຢ່າງໃດແດ່?
3. ທ່ານໄດ້ຮັບພຣະພອນຈາກການຮັບໃຊ້ທີ່ຖ່ອມຕົວຕໍ່ຄົນອື່ນຂອງທ່ານຢ່າງໃດ?

**<u>ສລູບ</u>:**

- ອະທິຖານປິດຫ້ອງຮຽນດ້ວຍການຂໍໃຫ້ພຣະເຈົ້ານຳພາຫົວໃຈຂອງພວກເຮົາໃຫ້ຮັບໃຊ້ຄົນອື່ນດ້ວຍຄວາມ ຖ່ອມຕົວເໝືອນດັ່ງພຣະອົງໄດ້ຊົງເຮັດມາ.

<u>ບົດຮຽນພຣະຄັມພີແຫ່ງຄວາມຈິງ:</u>

- ພຣະເຢຊູເປັນແບບຢ່າງໃນການຮັບໃຊ້ທີ່ຮັກ ແລະຖ່ອມຕົວທີ່ປະເສີດ.
- ພຣະເຢຊູໄດ້ຊົງຊັກຊວນໃຫ້ຮັບໃຊ້ຢ່າງຖ່ອມຕົວ ແລະຮຽກຮ້ອງໃຫ້ພວກເຮົາຍອມໃຫ້ພຣະອົງທຳງານ ໃນຊີວິດຂອງພວກເຮົາ.
- ພຣະເຢຊູບອກວ່າ: " ພຣະພອນບໍ່ໄດ້ມາຈາກສິ່ງທີ່ພວກເຮົາຮູ້, ແຕ່ມາຈາກການກະທຳໃນສິ່ງທີ່ເຮົາຮູ້ ຈັກເຮັດ.
- ອະທິຖານປິດການຮຽນ